ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 021 520 715, ແຟັກ: 021 256 259

ເລກທີ: 746 -----/ລອທ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2018

ມະຕິ

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຄັ້ງທີ 4 ປະຈຳປີ 2018. ວັນທີ 12 ພະຈິກ 2018

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2018

- ອີງຕາມລະບຽບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014;
- ອີງຕາມລະບຽບ ວ່າດ້ວຍການອອກຈຳໜ່າຍຮຸ້ນ, ສະບັບເລກທີ 018/ຄຄຊ, ລົງວັນທີ 27 ກໍລະກົດ 2015;

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2018 ຊຶ່ງຈັດຂຶ້ນໃນ ວັນທີ 12 ພະຈິກ 2018 ເວລາ 10.00 ໂມງຢູ່ທີ່ຫ້ອງປະຊຸມ ສຳນັກງານໃຫຍ່ ຂອງ ບໍລິສັດ ຕັ້ງຢູ່ທີ່ບ້ານວັດໄຕນ້ອຍທົ່ງ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ ສປປ.ລາວ ໂດຍມີການຮັບຮອງເອົາວາລະກອງປະຊຸມສະພາບໍລິຫານດັ່ງລຸ່ມນີ້:

1. **ມະຕິ:** ກອງປະຊຸມເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈຳປີ 2018.
2. **ມະຕິ:** ກອງປະຊຸມເຫັນດີຮັບຮອງບົດລາຍງານກອງປະຊຸມຄະນະກຳມະການກວດສອບ ຄັ້ງທີ 03 ປະຈຳປີ 2018. (ເຫັນດີຮັບຮອງເອົາບົດລາຍງານງົບການເງິນປະຈຳໄຕມາດ 03 ປະຈຳປີ 2018)
3. **ມະຕິ:** ກອງປະຊຸມເຫັນດີຮັບຮອງເອົາແຜນພັດທະນາການດຳເນີນທຸລະກິດປີ 2019 ເພື່ອພິຈາລະນາອະນຸມັດ ແລະຮັບຮອງ ໃນກອງປະຊຸມຄັ້ງຕໍ່ໄປ

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ທ່ານ ອະພິສິດ ອຸຈິຫຽດກຳຈອນ
ປະທານສະພາບໍລິຫານ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)